ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 04 ຫາ 08 ກັນຍາ 2023



## ຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມພືດ ສຳລັບການສົ່ງອອກ ເຂົ້າ, ມັນຕົ້ນ ແລະ ໝາກໂມ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມພືດ ສຳລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດຈາກ ສປປ ລາວ ໄປ ສປ ຈີນ (ເຂົ້າ, ມັນຕົ້ນ ແລະ ໝາກໂມ)

1. ກຳນົດເງື່ອນໄຂ ດ້ານສຸຂານາໄມ ຂອງ "ເຂົ້າ" (Rice) ສຳລັບການສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ



## ສັດຕູພືດກັກກັນ




- ຜູ້ສົ່ງອອກ ຕ້ອງຜ່ານການຂຶ້ນທະບຽນ ສະຖານທີ່ປະກອບການຜະລິດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້;
- ບໍ່ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນກຳນົດ;
- ຮັບປະກັນເຂົ້າສານຕ້ອງສະອາດ, ບໍ່ຕິກໂໝກ ແລະ ບໍ່ມີສິ່ງປົນເປື້ອນ ເຊັ່ນ: ແກບ, ຮຳ, ຕົ້ນເຂົ້າ, ໃບ, ເມັດຫຍ້າ, ເສດຊາກສັດ, ດິນ ແລະ ອື່ນໆ.
- ຕ້ອງມີການຈັດການສັດຕູພືດ ແບບປະສົມປະສານ (IPM)
- ໂຮງສີ ແລະ ໂຮງເຮືອນຫຸ້ມຫໍ່ບັນຈຸ ຕ້ອງມີການສຳຫຼວດ, ຕິດຕາມ ສັດຕູພືດ ໂດຍສະເພາະ ມອດ, ຕິດຕັ້ງກັບດັກ ພາຍໃນໂຮງສີ, ໂຮງເຮືອນຫຸ້ມຫໍ່ 1 ກັບດັກ/100 ຕາແມັດ;
- ວັດສະດຸຫຸ້ມຫໍ່ບັນຈຸຕ້ອງໃໝ່, ສະອາດ, ຕິດສະຫຼາກ ພາສາອັງກິດ, ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ສະຖານທີ່ສະເພາະ, ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ.
- ຕ້ອງມີໃບຢັ້ງຢືນສຸຂານາໄມພືດ
- ເມື່ອຊຸດສິນຄ້າມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ຖ້າເຈົ້າໜ້າທີ່ກັກກັນພືດຂອງ ສປ ຈີນ ກວດພົບສັດຕູພືດກັກກັນ ຊຸດສິນຄ້າຈະຖືກສົ່ງກັບ, ທຳລາຍ ຫຼື ນຳໃຊ້ມາດຕະການທີ່ມີ ປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ ພ້ອມທັງໂຈະຊົ່ວຄາວ ການນຳເຂົ້າ ເຂົ້າສານ ຈາກສວນປູກ,ໂຮງສີ ແລະ/ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນ ຈົນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ມາດຕະການທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

2. ກຳນົດເງື່ອນໄຂ ດ້ານສຸຂານາໄມ ຂອງ "ມັນຕົ້ນ" (cassava) ສຳລັບການສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ





## ສັດຕູພືດກັກກັນ




- ຜູ້ສົ່ງອອກ ຕ້ອງຜ່ານການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້;
- ມັນຕົ້ນສົ່ງອອກ ຕ້ອງເປັນມັນຕົ້ນຝານຕາກແຫ້ງ ແລະ ມັນຈົ້ນອັດເມັດ;
- ບໍ່ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນກຳນົດ, ຕ້ອງບໍ່ມີການປົນເປື້ອນ ຈາກດິນ, ແກ່ນຫຍ້າ ບໍ່ຕິກໂມະ, ບໍ່ມີສານພິດຕົກຄ້າງຈາກຢາປາບສັດຕູພືດ ແລະ ໂລຫະໜັກເກີນຄ່າມາດຕະຖານ;
- ຢູ່ສວນປູກ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສັດຕູພືດແບບປະສົມປະສານ (IPM);
- ໂຮງເຮືອນຫຸ້ມຫໍ່ບັນຈຸຕ້ອງໃໝ່, ສະອາດ, ຕິດສະຫຼາກ ພາສາອັງກິດ/ພາສາຈີນ, ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ສະຖານທີ່ສະເພາະ, ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ;
- ຕອງມີໃບຢັ້ງຢືນສຸຂານາໄມພືດ;
- ເມື່ອຊຸດສິນຄ້າ ມາເຖິງດ່ານເຂົ້າ ຂອງ ສປ ຈີນ, ຖ້າເຈົ້າໜ້າທີ່ກັກກັນພືດ ຂອງ ສປ ຈີນ ກວດພົບສັດຕູພືດກັກກັນ ຊຸດ ສິນຄ້າຈະຖືກສົ່ງກັບ, ທຳລາຍ ຫຼື ນຳໃຊ້ມາດຕະການທີ່ມີປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ ພ້ອມທັງໂຈະຊົ່ວຄາວການນຳເຂົ້າ ມັນຕົ້ນແຫ້ງ ຈາກສວນປູກ ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນ ຈີນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ ມາດຕະການ ທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

3. ກຳນົດເງື່ອນໄຂ ດ້ານສຸຂານາໄມ ຂອງ "ໝາກໂມ" (watermelon) ສຳລັບການສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ

- ຜູ້ສົ່ງອອກ ຕ້ອງຜ່ານການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້;
- ເປັນໝາກໂມສົດທີ່ບໍ່ຜ່ານການແປຮູບ, ຕ້ອງບໍ່ປົນເປື້ອນຈາກກ້ານ, ໃບ ແລະ ດິນ ແລະ ບໍ່ໃຫ້ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນ ກຳນົດໄວ້
- ສວນປູກ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສວນແບບປະສົມປະສານ, ຕ້ອງປະຕິບັດຕາມເງື່ອນໄຂມາດ ຕະຖານກະສິກຳທີ່ດີ GAP ແລະ ມີການຈັດການສັດຕູພືດແບບປະສົມປະສານ IPM
- ການຫຸ້ມຫໍ່ບັນຈຸ ຕ້ອງຄັດເລືອກເອົາໝາກທີ່ສົມບູນ ປາສະຈາກ ໝາກເນົ່າ, ພະຍາດ, ແມງໄມ້, ກ້ານ, ໃບ,ດິນ ແລະ ສ່ວນເສດເຫຼືອອື່ນ ອອກໃຫ້ໝົດ. ເຮັດອານາໄມ ແລະ ເຄືອບເງົາເພື່ອກຳຈັດໄຂ່ແມງໄມ້, ເພ້ຍຫອຍ, ໄຣ, ແມງໝີ່ຂາວ ທີ່ຢູ່ຕາມເປືອກຂອງໝາກໂມ,ພ້ອມທັງກຳຈັດເຊື້ອພະຍາດດ້ວຍການໃຊ້ຢາຂ້າເຊື້ອຣາຫຼັງການເກັບກ່ຽວ.
- ວັດສະດຸຫຸ້ມຫໍ່ບັນຈຸຕ້ອງໃໝ່, ສະອາດ, ຕິດສະຫຼາກ ພາສາອັງກິດ,ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ່ມຫໍ່ ແລະ ວັກເດືອນປີຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ໃນ ສະຖານທີ່ສະອາດເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ.
- ຕ້ອງມີໃບຢັ້ງຢືນສຸຂານາໄມພືດ.
- ເມື່ອຊຸດສິນຄ້າ ມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ຖ້າເຈົ້າໜ້າທີ່ກັກກັນພືດຂອງ ສປ ຈີນ ກວດພົບສັດຕູພືດກັກກັນ ຫຼື ນຳໃຊ້ມາດຕະການທີ່ມີປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ ພ້ອມທັງໂຈະຊົ່ວຄາວ ການນຳເຂົ້າໝາກໂມ ຈາກສວນປູກ ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນຈົນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ມາດຕະການ ທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

## ສັດຕູພືດກັກກັນ




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ;